ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
~~~~~ ✧✧✧ ~~~~~

# ບົດບັນທຶກ
# ກອງປະຊຸມແລກປ່ຽນຄວາມເຫັນ
# ການດຳເນີນຄະດີຕາມຂະບວນຍຸຕິທຳຄັ້ງທີ IV

ເພື່ອຈັດຕັ້ງຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍເທື່ອລະກ້າວ; ເພື່ອເປັນການຕີລາຄາຄືນການຈັດຕັ້ງປະຕິບັດເນື້ອໃນກອງປະຊຸມຮ່ວມຄັ້ງທີຜ່ານມາຢ່າງຖືກຕ້ອງ ແລະ ພາວະວິໄສ, ທັງເປັນການເພີ່ມທະວີ ແລະ ຍົກສູງຄຸນນະພາບວຽກງານການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ຮັບປະກັນ ຄວາມຖືກຕ້ອງຕາມແນວທາງຂອງພັກ, ລະບຽບກົດໝາຍຂອງລັດ ແລະ ຖືກກັບຄວາມເປັນຈິງ, ຕີຖອຍບັນດາປະກົດການຫຍໍ້ທໍ້ພາຍໃນຖັນພະນັກງານ, ລັດຖະກອນ, ທາງສຽງສັງຄົມ, ຄຳຕຳນິສົ່ງຂ່າວ ຕໍ່ການດຳເນີນຄະດີຕາມຂະບວນການຍຸຕິທຳຂອງພວກເຮົາ.

ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ ຈຶ່ງໄດ້ຮ່ວມກັນຈັດຕັ້ງກອງປະຊຸມແລກປ່ຽນຄວາມເຫັນການດຳເນີນຄະດີຕາມຂະບວນຍຸຕິທຳ ຄັ້ງທີ IV ຂຶ້ນ ໃນວັນທີ 24-25 ເດືອນ ມັງກອນ 2013 ທີ່ຫ້ອງປະຊຸມຂອງກະຊວງປ້ອງກັນຄວາມສະຫງົບ ໂດຍການເປັນປະທານຮ່ວມຂອງ**ທ່ານ ດຣ ທອງບັນ ແສງອາພອນ** ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ, ທ່ານ ສົມພັນ ແພງຄຳມີ ຮອງປະທານສະພາແຫ່ງຊາດ, ທ່ານ ສຈ. ດຣ.ຈະເລີນ ເຢຍປາວເຮີ ລັດຖະມົນຕີວ່າການກະຊວງຍຸຕິທຳ, ທ່ານ ຄຳສານ ສຸວົງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ທ່ານ ຄຳພັນ ສິດທິດຳພາ ປະທານສານປະຊາຊົນສູງສຸດ.

ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຍັງມີບັນດາທ່ານຜູ້ຕາງໜ້າຄະນະກວດກາສູນກາງ, ຫ້ອງວ່າການລັດຖະບານ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງສາທາ ລະນະສຸກ ແລະ ພະນັກງານຈາກກົມກອງຂອງ 4 ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມລວມທັງໝົດ 131 ທ່ານ, ຍິງ 04 ທ່ານ.

ກອງປະຊຸມ ໄດ້ດຳເນີນມາເປັນເວລາ 01 ວັນເຄິ່ງ ໂດຍມີເນື້ອໃນດັ່ງນີ້ :
~~~~~

1. ກອງປະຊຸມໄດ້ເປັນເອກະພາບຢ່າງສູງ ຮັບຮອງເອົາບົດລາຍງານຂອງກະຊວງປ້ອງກັນຄວາມສະຫງົບ ຕໍ່ການສັງເກດຕີລາຄາຮອບດ້ານ, ພາວະວິໃສ, ກົງໄປກົງມາ ຕໍ່ການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມແລກປ່ຽນຄວາມເຫັນການດຳເນີນຄະດີຕາມຂະບວນການຍຸຕິທຳຄັ້ງທີ III ຜ່ານມາ ໂດຍຍົກໃຫ້ເຫັນດ້ານດີພົ້ນເດັ່ນ, ຜົນງານທີ່ເຮັດໄດ້, ຍົກໃຫ້ເຫັນດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ໃນປີຜ່ານມາ ພ້ອມນັ້ນກໍ່ໄດ້ກຳນົດທິດທາງແຜນການສູ້ຊົນໃນປີຕໍ່ໜ້າ ຊຶ່ງສະແດງອອກດັ່ງນີ້:

## 1.1 ດ້ານດີທີ່ເປັນພື້ນຖານ:

1.1.1 ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ໄດ້ຕັ້ງໜ້າໂຄສະນາສຶກສາອົບຮົມດ້ານການເມືອງແນວຄິດໃຫ້ແກ່ພະນັກງານ, ລັດຖະກອນຂອງຕົນໃຫ້ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດຢ່າງຕໍ່ເນື່ອງ.

1.1.2 ຄະນະພັກ ຄະນະນຳຂອງບັນດາຂະແໜງ ແລະ ອົງການທີ່ຮັບຜິດຊອບວຽກງານດຳເນີນຄະດີຕາມຂະບວນການຍຸຕິທຳ, ບັນດາກະຊວງ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕະຫຼອດຮອດອົງການການປົກຄອງ ແຕ່ລະຂັ້ນໄດ້ມີຄວາມຕັ້ງໜ້າຊີ້ນຳ-ນຳພາວຽກງານດຳເນີນຄະດີຕາມຂະບວນຍຸຕິທຳ ຕາມພາລະບົດບາດ, ສິດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນໄດ້ດີຂຶ້ນ.

1.1.3 ຄະນະພັກ ຄະນະນຳຂອງບັນດາຂະແໜງການ ແລະ ອົງການທີ່ຮັບຜິດຊອບວຽກງານດຳເນີນຄະດີຕາມຂະບວນການຍຸຕິທຳ, ບັນດາກະຊວງ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພາກສ່ວນ ທີ່ກ່ຽວຂ້ອງຕະຫຼອດຮອດອົງການປົກຄອງແຕ່ລະຂັ້ນ ໄດ້ມີຄວາມຕັ້ງໜ້າຄົ້ນຄ້ວາປັບປຸງລະບອບລະບຽບ ກໍຄືກົນໄກໃນການປະສານສົມທົບ ໃນການດຳເນີນຄະດີໄປຕາມຂະບວນຍຸຕິທຳຢູ່ແຕ່ລະຂັ້ນ ໄປຕາມຂັ້ນຕອນຂອງລະບຽບກົດໝາຍເທື່ອລະກ້າວ ເຮັດໃຫ້ການແກ້ໄຂຄະດີຕ່າງໆ ໄດ້ດຳເນີນໄປຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ຄວາມເປັນຈິງຫຼາຍຂຶ້ນ ຊຶ່ງໄດ້ສ້າງຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈໃຫ້ແກ່ພັກ-ລັດ, ປະຊາຊົນລາວບັນດາເຜົ່າຕໍ່ການດຳເນີນຄະດີຕາມຂະບວນຍຸຕິທຳຂອງພວກເຮົາຫຼາຍຂຶ້ນ.

1.1.4 ບັນດາກະຊວງ ກໍຄືອົງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງແຕ່ລະຂັ້ນໄດ້ຄົ້ນຄ້ວາ ແລະ ສ້າງບັນດານິຕິກຳເພື່ອຈັດຕັ້ງຜັນຂະຫຍາຍເປັນອັນລະອຽດຂອງຕົນ ແລະ ມີແຜນການເຄື່ອນໄຫວຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ການຊຸກຍູ້ຢ່າງເປັນປົກກະຕິ.

1.2 ດ້ານອ່ອນ-ຂໍ້ຄົງຄ້າງ:

1.2.1 ການໂຄສະນາເຜີຍແຜ່ກົດໝາຍໃຫ້ສັງຄົມໂດຍສະເພາະບັນດາກົດໝາຍທີ່ກ່ຽວຂ້ອງກັບການດຳເນີນຄະດີຕາມຂະບວນຍຸຕິທຳ ຍັງບໍ່ທັນເຮັດໄດ້ຢ່າງກວ້າງຂວາງ, ເລິກເຊິ່ງ ທົ່ວເຖິງທຸກເປົ້າໝາຍ.

1.2.2 ເຖິງວ່າໄດ້ມີການປຶກສາຫາລືແກ້ໄຂວຽກງານຕົວຈິງ ຢ່າງເປັນປົກກະຕິ ແຕ່ການຜັນຂະຫຍາຍເປັນນິຕິກຳອັນລະອຽດ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວປະສານສົມທົບກັນ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງເພື່ອປະຕິບັດຕົວຈິງຍັງບໍ່ທັນໄດ້ດີເທົ່າທີ່ຄວນ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງໃນທົ່ວປະເທດບໍ່ທັນສູງແທ້.

1.2.3 ພະນັກງານ, ລັດຖະກອນ, ເຈົ້າໜ້າທີ່ໃນບັນດາຂະແໜງການ ແລະ ອົງການທີ່ຮັບຜິດຊອບວຽກງານດຳເນີນຄະດີຕາມຂະບວນຍຸຕິທຳຈຳນວນໜຶ່ງ ຄຸນທາດການເມືອງບໍ່ທັນໜັກແໜ້ນ, ກຳລະບຽບກົດໝາຍບໍ່ທັນເລິກເຊິ່ງ, ສວຍໂອກາດສວຍໃຊ້ຊ່ອງຫວ່າງຂອງກົດໝາຍເພື່ອຜົນປະໂຫຍດສ່ວນຕົວ, ລະດັບຄວາມຮູ້ຄວາມສາມາດ ແລະ ປະສົບການວຽກງານຕົວຈິງບໍ່ທັນຫຼາຍ ຈຶ່ງເຮັດໃຫ້ການດຳເນີນແກ້ໄຂຄະດີຈຳນວນໜຶ່ງມີຄວາມຫຍຸ້ງຍາກສັບສົນ, ບໍ່ຖືກກັບຕົວຈິງ, ບໍ່ໄປຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້.

1.2.4 ການບຳລຸງຍົກລະດັບດ້ານທິດສະດີການເມືອງ, ກົດໝາຍ, ດ້ານວິຊາສະເພາະ ໃຫ້ແກ່ພະນັກງານ, ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ເຮັດໜ້າທີ່ໃນການດຳເນີນຄະດີຕາມຂະບວນຍຸຕິທຳ ຍັງບໍ່ທັນເຮັດໄດ້ຢ່າງຕໍ່ເນື່ອງ ແລະ ຄຸນນະພາບບໍ່ທັນສູງ.

1.3 ທິດທາງ ແລະ ວຽກງານຈຸດສຸມໃນຕໍ່ໜ້າ:

1.3.1 ຕັ້ງໜ້າໂຄສະນາສຶກສາອົບຮົມດ້ານການເມືອງແນວຄິດໃຫ້ແກ່ພະນັກງານ, ລັດຖະກອນ, ເຈົ້າໜ້າທີ່ຂອງຕົນ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄວາມສັດຊື່ບໍລິສຸດ, ມີຈັນຍາບັນ, ຈັນຍາທຳ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດຢ່າງຕໍ່ເນື່ອງ ແລະ ມີຄວາມຮັບຜິດຊອບສູງ ເພື່ອເຮັດສຳເລັດໜ້າທີ່ຂອງຕົນ.

1.3.2 ເອົາໃຈໃສ່ໂຄສະນາເຜີຍແຜ່ກົດໝາຍໃຫ້ສັງຄົມ ຢ່າງກວ້າງຂວາງ, ເລິກເຊິ່ງ ແລະ ແທດເຖິງເປົ້າໝາຍ.

1.3.3 ປັບປຸງກົງຈັກການຈັດຕັ້ງ, ຊັບຊ້ອນບຸກຄະລະກອນ ທີ່ມີຄວາມຮູ້ຄວາມສາມາດເຂົ້າໃສ່ການຈັດຕັ້ງ ໃນຂະແໜງການ ແລະ ອົງການທີ່ຮັບຜິດຊອບວຽກງານດຳເນີນຄະດີຕາມຂະບວນຍຸຕິທຳໃຫ້ພຽງພໍ, ເໝາະສົມ ຕິດພັນກັບການບຳລຸງຍົກລະດັບດ້ານກົດໝາຍ, ດ້ານ

ວິຊາສະເພາະ ໃນແຕ່ລະໄລຍະໃຫ້ມີຄຸນນະພາບສູງຂຶ້ນ ແລະ ຕອບສະໜອງງົບປະມານ, ພາຫະນະ, ອຸປະກອນເຕັກນິກ ທີ່ຈຳເປັນຮັບໃຊ້ເຂົ້າໃນວຽກງານດັ່ງກ່າວ.

1.3.4 ປັບປຸງ ແລະ ສ້າງບັນດານິຕິກຳຕ່າງໆ ໃຫ້ຄົບຖ້ວນ, ຮັດກຸມ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວເຮັດໜ້າທີ່ຂອງຂະແໜງການ ແລະ ອົງການທີ່ຮັບຜິດຊອບວຽກງານດຳເນີນຄະດີຕາມຂະບວນຍຸຕິທຳ.

1.3.5 ເພີ່ມທະວີປັບປຸງກົນໄກ ລະບອບລະບຽບການພົວພັນປະສານສົມທົບ ເຊິ່ງກັນ ແລະ ກັນ ເພື່ອປຶກສາຫາລື ແລະ ແກ້ໄຂບັນຫາຕ່າງໆໃນການດຳເນີນຄະດີ ໃຫ້ມີຄວາມເປັນເອກະພາບຖືກຕ້ອງຕາມລະບຽບກົດໝາຍ, ຖືກຕ້ອງຕາມຄວາມຈິງ ແລະ ຮັບປະກັນຄວາມຍຸຕິທຳຕໍ່ສັງຄົມ.

2. ກອງປະຊຸມສະແດງຄວາມຍ້ອງຍໍຊົມເຊີຍ ກະຊວງປ້ອງກັນຄວາມສະຫງົບ, ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ຕັ້ງໜ້າກະກຽມ, ເຂົ້າຮ່ວມ ແລະ ປະກອບຄຳເຫັນ ຕໍ່ກອງປະຊຸມຮ່ວມຄັ້ງທີ IV ໄດ້ຮັບຜົນດີ. ພ້ອມກັນນີ້ ກອງປະຊຸມ ຍັງຍ້ອງຍໍຊົມເຊີຍພະນັກງານ, ເຈົ້າໜ້າທີ່ທຸກພາກສ່ວນ, ທຸກຄົນທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ໃນການດຳເນີນຄະດີດ້ວຍຄວາມຮັບຜິດຊອບສູງ,ເຮັດໃຫ້ການດຳເນີນຄະດີຕາມຂະບວນຍຸຕິທຳຂອງພວກເຮົານັບມື້ມີຄຸນນະພາບສູງຂຶ້ນ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຍຸຕິທຳດີຂື້ນເລື້ອຍໆ.

3. ກອງປະຊຸມໄດ້ຕົກລົງ ຮັບຮອງເອົາ ບາງບັນຫາເພື່ອເປັນບ່ອນອີງໃຫ້ແກ່ບັນດາຂະແໜງການ ແລະ ອົງການທີ່ຮັບຜິດຊອບວຽກງານດຳເນີນຄະດີຕາມຂະບວນຍຸຕິທຳໄປຈັດຕັ້ງເຊື່ອມຊຶມ ແລະ ປະຕິບັດໃຫ້ມີຄວາມເປັນເອກະພາບ ແລະ ເຂັ້ມງວດ ດັ່ງນີ້:

3.1 ການປັບປຸງນິຕິກຳ, ກອງປະຊຸມເຫັນດີໃຫ້ຄົ້ນຄວ້າ ເພື່ອປັບປຸງບາງມາດຕາກົດໝາຍອາຍາ ໃຫ້ສອດຄ່ອງ.

ມອບໃຫ້ວິຊາການຂອງ 4 ພາກສ່ວນຈັດກອງປະຊຸມປຶກສາຫາລືໂດຍໄວ ໂດຍກະຊວງຍຸຕິທຳ ເປັນໃຈກາງໃນການປະສານສົມທົບ, ຄົ້ນຄວ້າ, ປັບປຸງ ເປັນຕົ້ນມາດຕາ 120 ຂອງກົດໝາຍອາຍາ, ຄົ້ນຄວ້າການຕີຄວາມໝາຍ ລະຫວ່າງຄະດີແພ່ງ ແລະ ຄະດີອາຍາ ແລະ ອື່ນໆ ເພື່ອສະເໜີຜ່ານລັດຖະບານ ແລ້ວສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາ.

3.2 ການດຳເນີນຄະດີອາຍາ ກ່ຽວກັບຢາເສບຕິດ.

ປັດຈຸບັນໃຫ້ຈັດຕັ້ງປະຕິບັດເປັນເອກະພາບ ແລະ ເຂັ້ມງວດ ຕາມມາດຕາ 75, 76 ຂອງກົດໝາຍວ່າດ້ວຍຢາເສບຕິດ ແລະ ມາດຕາ 146 ກົດໝາຍອາຍາສະບັບປັບປຸງໃໝ່ ຕາມມະຕິຕົກລົງຂອງສະພາ

ແຫ່ງຊາດໄດ້ຮັບຮອງເອົານັ້ນກ່ອນ, ພາຍຫຼັງປະທານປະເທດອອກລັດຖະດໍາລັດ ຮັບຮອງເອົາ ແລະ ປະກາດໃຊ້ ໃຫ້ຈັດຕັ້ງປະຕິບັດຢ່າງເປັນທາງການ ນັບແຕ່ມື້ປະກາດເປັນຕົ້ນໄປ.

3.3 ການດໍາເນີນຄະດີໃຫຍ່, ພົວພັນກັບຕ່າງປະເທດ, ທ້ອງຖິ່ນບໍ່ສາມາດດໍາເນີນໄດ້, ມີຄວາມຫຍຸ້ງຍາກສັບສົນ ແລະ ມີຄວາມສໍາຄັນ.

- ຕ້ອງໄດ້ເອົາຂຶ້ນມາດໍາເນີນຢູ່ກະຊວງປ້ອງກັນຄວາມສະຫງົບ ຕາມການຕົກລົງເຫັນດີຂອງລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ແລະ ກົມວິຊາສະເພາະຂອງກະຊວງປ້ອງກັນຄວາມສະຫງົບຈະເປັນຜູ້ດໍາເນີນ ໂດຍມີການລາຍງານປຶກສາຫາລືກັບໄອຍະການປະຊາຊົນສູງສຸດ ຫຼື ສານປະຊາຊົນສູງສຸດ ເພື່ອຄວາມເປັນເອກະພາບ ແລະ ຊີ້ຂາດຕໍ່ການສະເໜີຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕໍາຫຼວດ ທັງເປັນການຈັດຕັ້ງປະຕິບັດຕາມບົດບັນທຶກສະບັບເລກທີ 02/ອອປສ, ລົງວັນທີ 15/2/2011.

- ສໍາລັບທ້ອງຖິ່ນ ຄະດີໃດທີ່ມີຄວາມຫຍຸ້ງຍາກສັບສົນ ບໍ່ທັນເປັນເອກະພາບກັນ ເຊັ່ນ: ການກໍານົດການກະທໍາຜິດຕາມກົດໝາຍອາຍາ, ການນໍາໃຊ້ມາດຕະການສະກັດກັ້ນ ແລະ ອື່ນໆ ແມ່ນໃຫ້ຄົ້ນຄວ້າປຶກສາຫາລືເປັນເອກະພາບກັນກ່ອນ ຈຶ່ງພິຈາລະນາໃນການແກ້ໄຂ ໂດຍຮັບປະກັນໃຫ້ມີຄວາມເປັນເອກະພາບກັນ ແລະ ຖືກຕ້ອງຕາມກົດໝາຍ.

3.4 ການກວດພິສູດວິໃຈ ຢາເສບຕິດ, ອາຫານ, ທາດເບື່ອ ແລະ ວັດຖຸທີ່ມີຄ່າ.

- ໃນກໍລະນີບໍ່ມີບັນຫາຍຸ້ງຍາກ ໃຫ້ກວດພິສູດຢູ່ບ່ອນໜຶ່ງບ່ອນດຽວກໍ່ໄດ້.
- ໃນກໍລະນີມີບັນຫາຍຸ້ງຍາກໃຫ້ກວດພິສູດຢູ່ສາມບ່ອນຂຶ້ນໄປຈຶ່ງຖືວ່າໃຊ້ໄດ້.
- ການຕິດຊັ່ງນໍ້າໜັກຢາເສບຕິດທຸກປະເພດໃຫ້ຊັ່ງເປັນກຣາມ (g) ຫຼື ກິໂລກຣາມ (kg), ກໍລະນີເປັນເມັດໃຫ້ນັບເປັນຈໍານວນເມັດ ແລະ ຊັ່ງເປັນກຣາມ ຫຼື ກິໂລກຣາມ.
- ສ່ວນກວດພິສູດລາຍມືວມື, ລາຍນີ້ວຕີນ, ເສັ້ນຜົມ, ເອກະສານ, ຫົວກະສອບລູກປືນ ແລະ ປືນ ແມ່ນມອບໃຫ້ກົມຕໍາຫຼວດນິຕິວິທະຍາ, ກົມໃຫຍ່ຕໍາຫຼວດ, ກະຊວງປ້ອງກັນຄວາມສະຫງົບ ດໍາເນີນກວດພິສູດ.

3.5 ຂອງກາງຄະດີ.

ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາມາດຕາ 150 ສະບັບປັບປຸງໃໝ່ ກໍານົດວ່າ ການສິ້ນສຸດການສືບສວນ-ສອບສວນ ຈຶ່ງປະກອບສໍານວນຄະດີແລ້ວສົ່ງໃຫ້ອົງການໄອຍະການປະຊາຊົນ ພ້ອມດ້ວຍຂອງກາງພາຍໃນກໍານົດ 3 ວັນ. ແຕ່ສະພາບຄວາມເປັນຈິງຂອງປະເທດພວກເຮົາ ໃນປັດຈຸບັນ ບໍ່ທັນສາມາດປະຕິບັດໄດ້ ຈຶ່ງມອບຂອງກາງຄະດີທັງໝົດໃຫ້ເຈົ້າໜ້າທີ່ຕໍາຫຼວດເປັນຜູ້ປົກປັກຮັກສາມ້ຽນ ແຕ່ຕ້ອງຮັບປະກັນໃຫ້ມີບົດບັນທຶກການໄດ້ມາຂອງກາງໃຫ້ລະອຽດເປັນຕົ້ນ: ຖ່າຍຮູບ, ອັດສຽງ, ກວດນັບຈໍານວນ, ຕິດຊັ່ງນໍ້າໜັກ, ມີການກວດພິສູດວິໃຈເບື້ອງຕົ້ນ, ບອກປະເພດ, ເລກລະຫັດ ແລະ ອື່ນໆ ຈາກນັ້ນໃຫ້ຫຸ້ມຫໍ່, ເກັບມ້ຽນ ແລະ ຮັກສາໃຫ້ປອດໄພ. ເມື່ອເວລາສານຕັດສິນ ແລະ ຈັດຕັ້ງປະຕິບັດຄໍາຕັດສິນຂອງສານຕ້ອງຮັບປະກັນໃຫ້ມີເຄື່ອງຂອງກາງ ຫຼື ຫຼັກຖານທີ່ຮັດກຸມ (ຮູບພາບ, ສຽງທີ່ອັດໄວ້ ແລະ ອື່ນໆ) ໄປເປັນຫຼັກ

ຖານຍັ້ງຢືນຢູ່ທີ່ປະຊຸມສານ ແລະ ມາຈັດຕັ້ງປະຕິບັດ. ບາງວັດຖຸຂອງກາງທີ່ຈໍາເປັນຮັກສາໄວ້ບໍ່ໄດ້ກໍ່ໃຫ້ແກ້ໄຂ ຫຼື ທໍາລາຍຖິ້ມ ແຕ່ຕ້ອງມີການຕົກລົງຢ່າງເປັນທາງການຂອງອົງການທີ່ມີສິດອໍານາດ ແລະ ຈັດຕັ້ງພິທີທໍາລາຍຢ່າງຈະແຈ້ງສັດເຈນ.

3.6 ການປ່ອຍຕົວນັກໂທດຄົບກໍານົດ ຫຼື ປ່ອຍຕົວກ່ອນກໍານົດ.

ນັກໂທດທີ່ໄດ້ປະຕິບັດໂທດຄົບກໍານົດ ຕາມຄໍາຕັດສິນຂອງສານ ຕ້ອງປ່ອຍຕົວຕາມກົດໝາຍກໍານົດ, ສ່ວນການສໍາລະທາງແພ່ງ ແລະ ຄ່າປັບໄໝແມ່ນມອບໃຫ້ອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານສືບຕໍ່ດໍາເນີນຕາມລະບຽບກົດໝາຍ, ແຕ່ກ່ອນຈະປ່ອຍຕົວ ຕ້ອງໄດ້ປະສານສົມທົບ ແລະ ແຈ້ງໃຫ້ອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານຮູ້ກ່ອນລ່ວງໜ້າ 01 ເດືອນ.

3.7 ກໍລະນີຜູ້ຕ້ອງຫາ-ນັກໂທດຍິງ ຖືພາ ຫຼື ມີລູກນ້ອຍອາຍຸຕໍ່າກວ່າ 01 ປີ.

ເຫັນດີໃຫ້ພໍ່ແມ່ ຫຼື ຜົວ ຫຼື ຜູ້ປົກຄອງ ຫຼື ຍາດຕິພີ່ນ້ອງ ຮັບປະກັນອອກໄປຈົນກວ່າເກີດລູກ,ຈົນກວ່າລູກມີອາຍຸແຕ່ 01 ປີຂຶ້ນໄປຕາມມາດ 242 (ໃໝ່) ວັກສອງ ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລ້ວຈຶ່ງໃຫ້ຜູ້ກ່ຽວກັບຄືນມາປະຕິບັດໂທດຕາມການຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ.

4. ກອງປະຊຸມເຫັນດີ ຮັບຮອງເອົາບັນດາຂໍ້ສະເໜີຂອງບັນດາທ່ານ ຜູ້ແທນທຸກພາກສ່ວນ ທີ່ໄດ້ປະກອບຄໍາເຫັນໃນກອງປະຊຸມ ທີ່ພົວພັນກັບບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ໂດຍມອບໃຫ້ກອງເລຂາອະນຸກໍາມະການຮັບຜິດຊອບເນື້ອໃນ ກອງປະຊຸມສັງລວມເອົາ ບັນດາຂໍ້ສະເໜີຕ່າງໆແລ້ວສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາປັບປຸງແກ້ໄຂຕໍ່ໄປ.

5. ເຫັນດີສືບຕໍ່ສະເໜີສະພາແຫ່ງຊາດ ພິຈາລະນາ ແລະ ໃຫ້ທິດຊີ້ນໍາກ່ຽວກັບຄໍາຕັດສິນຂອງສານ ທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ເຊັ່ນ: ການປະຕິບັດໂທດປັບໄໝທີ່ມີຈໍານວນຫຼວງຫຼາຍ, ເງື່ອນໄຂບໍ່ສາມາດປະຕິບັດໄດ້, ຜູ້ບໍ່ຮູ້ບ່ອນຢູ່ທີ່ແນ່ນອນ, ຄະດີທີ່ຄອບຄົວຍົກຍ້າຍໄປຢູ່ບ່ອນອື່ນບໍ່ສາມາດຊອກຫາເຫັນໄດ້, ຄະດີດຽວທີ່ຫຼາຍພາກສ່ວນມີຄໍາເຫັນ, ຄໍາຕັດສິນຈັດຕັ້ງປະຕິບັດສິ້ນສຸດ ແລະ ອອກຄໍາສັ່ງປິດສໍານວນຄະດີແລ້ວ ແຕ່ມີການຮື້ຟື້ນ ແລະ ມີການຕັດສິນຄະດີຄືນໃໝ່, ຜູ້ທຸກຍາກບໍ່ສາມາດໃຊ້ແທນຄ່າເສຍຫາຍທາງແພ່ງຕາມຄໍາຕັດສິນຂອງສານ.

6. ກອງປະຊຸມສະເໜີລັດຖະບານຊ່ວຍຊີ້ນໍາອົງການປົກຄອງທ້ອງຖິ່ນໃຫ້ເພີ່ມທະວີຊຸກຍູ້ ຊ່ວຍເຫຼືອດ້ານຕ່າງໆ ໃຫ້ບັນດາຂະແໜງການ ແລະ ອົງການທີ່ຮັບຜິດຊອບດໍາເນີນຄະດີຕາມຂະບວນຍຸຕິທໍາເຊັ່ນ: ງົບປະມານ, ສະຖານທີ່ບ່ອນເຮັດວຽກ, ພາຫະນະ, ວັດຖຸອຸປະກອນທີ່ຈໍາເປັນ ເພີ່ມໃຫ້ພາກສ່ວນນີ້ສາມາດເຄື່ອນໄຫວເຮັດໜ້າທີ່ຂອງຕົນໄດ້ຢ່າງມີປະສິດທິຜົນສູງ.

7. ຮຽກຮ້ອງມາຍັງພະນັກງານ ລັດຖະກອນ ທີ່ປະຕິບັດໜ້າທີ່ດຳເນີນຄະດີຕາມຂະບວນຍຸຕິທຳ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນໃຫ້ແໜ້ນແຟ້ນ, ເອົາໃຈໃສ່ປະສານສົມທົບໃຫ້ກົມກຽວກັນ, ຈົ່ງພ້ອມກັນຍົກສູງບົດບາດຄວາມຮັບຜິດຊອບການເມືອງຂອງຕົນ, ໃກ້ສິດຕິດແທດກັບຕົວຈິງ ໃຫ້ຫຼາຍຂຶ້ນ. ສະນັ້ນ, ພະນັກງານລັດຖະກອນທີ່ເຮັດໜ້າທີ່ດຳເນີນຄະດີຕາມຂະບວນຍຸຕິທຳ ຕ້ອງມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ກຳແໜ້ນລະບຽບກົດໝາຍຢ່າງເລິກເຊິ່ງເຖິງຖອງ, ມີຄວາມເປັນແບບຢ່າງນຳໜ້າ, ເຊີດຊູນ້ຳໃຈຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີຄວາມເຂັ້ມແຂງດ້ານການຈັດຕັ້ງ, ມີຄວາມຊຳນານທາງດ້ານວິຊາສະເພາະ, ສ້າງຄວາມຕັດສິນໃຈຕີຖອຍ ໃຫ້ໄດ້ແນວຄິດແບບຄອງເດີມ ຫັນໄປສູ່ແບບແຜນວິທີເຮັດວຽກອັນໃໝ່ທີ່ກ້າວໜ້າ, ເສີມຂະຫຍາຍຫົວຄິດປະດິດສ້າງຢ່າງເຕັມສ່ວນ, ສ້າງບາດກ້າວບຸກທະລຸໃນທຸກດ້ານ, ຕີຖອຍແນວຄິດສວຍໂອກາດ, ລະເມີດກົດໝາຍຫາຜົນປະໂຫຍດສ່ວນຕົວ ພາໃຫ້ເຊື່ອມເສຍຖານະບົດບາດຂອງຂະແໜງການດຳເນີນຄະດີຕາມຂະບວນຍຸຕິທຳ.

8. ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ເປັນບາດກ້າວ ແລະ ຂີດໝາຍທີ່ສຳຄັນ ໃນການປະສານສົມທົບດຳເນີນຄະດີຕາມຂະບວນຍຸຕິທຳຂອງພວກເຮົາ. ໂດຍອີງໃສ່ຜົນສຳເລັດດັ່ງກ່າວນີ້ ແຕ່ລະພາກສ່ວນຈົ່ງພ້ອມນຳເອົາບັນດາເນື້ອໃນຈິດໃຈ ກໍຄືທິດທາງແຜນການ, ບັນດາວຽກງານຈຸດສຸມເນື້ອໃນ ຂອງກອງປະຊຸມໃນຄັ້ງນີ້ ໄປຈັດຕັ້ງປະຕິບັດເຂົ້າສູ່ຊີວິດ ແລະ ວຽກງານຕົວຈິງຢູ່ໃນຂົງເຂດທີ່ຕົນຮັບຜິດຊອບ, ແນ່ໃສ່ເຮັດໃຫ້ການດຳເນີນຄະດີຕາມຂະບວນຍຸຕິທຳໃນຊຸມປີຕໍ່ໜ້າມີຄຸນນະພາບ, ປະສິດທິຜົນສູງຂຶ້ນກວ່າເກົ່າ. ມອບໃຫ້ອົງການຂັ້ນສູນກາງຊີ້ນຳຂັ້ນລຸ່ມທີ່ປະຕິບັດຂອງຕົນຊາບໂດຍໄວ ແລະ ອີກຮູບໜຶ່ງແມ່ນໃຫ້ບັນດາກອງບັນຊາການປກສແຂວງ, ນະຄອນຫຼວງ ເປັນໃຈກາງ.

9. ກອງປະຊຸມແລກປ່ຽນຄວາມເຫັນການດຳເນີນຄະດີຕາມຂະບວນຍຸຕິທຳຄັ້ງທີ IV ໄດ້ສຳເລັດ ຕາມລະດັບຄາດໝາຍ ແລະ ປິດລົງຢ່າງເປັນທາງການ ໃນເວລາ 12 ໂມງ 00 ນາທີ ຂອງວັນທີ 25 ເດືອນ ມັງກອນ 2013 ແລະ ກອງປະຊຸມໄດ້ຕົກລົງເຫັນດີເປັນເອກະພາບມອບໃຫ້ກະຊວງຍຸຕິທຳເປັນເຈົ້າພາບຈັດກອງປະຊຸມແລກປ່ຽນຄວາມເຫັນການດຳເນີນຄະດີຕາມຂະບວນຍຸຕິທຳຄັ້ງທີ V ຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ 25 ມັງກອນ 2013

| | | | |
|---|---|---|---|
| ລັດຖະມົນຕີວ່າການ<br>ກະຊວງປ້ອງກັນຄວາມສະຫງົບ | ລັດຖະມົນຕີວ່າການ<br>ກະຊວງຍຸຕິທຳ | ຫົວໜ້າ<br>ອົງການໄອຍະການປະຊາຊົນສູງສຸດ | ປະທານ<br>ສານປະຊາຊົນສູງສຸດ |
| ພົນເອກ ທອງບັນ ແສງອາພອນ | ສຈ.ດຣ. ຈະເລີນ ເຢຍປາວເຮີ | ຄຳສານ ສຸວົງ | ຄຳພັນ ສິດທິດຳພາ |